ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 238 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2021

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ ກົດໝາຍ ວ່າດ້ວຍເຕັກໂນໂລຊີລະດັບສູງ**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 34/ສພຊ, ລົງວັນທີ 16 ພະຈິກ 2021 ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍເຕັກໂນໂລຊີລະດັບສູງ;
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 14/ຄປຈ, ລົງວັນທີ 15 ທັນວາ 2021.

ປະທານປະເທດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ ກົດໝາຍ ວ່າດ້ວຍເຕັກໂນໂລຊີລະດັບສູງ.

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ສະພາແຫ່ງຊາດ

ເລກທີ 34 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 16 / 11 / 21

# ມະຕິ
# ຂອງກອງປະຊຸມສະພາແຫ່ງຊາດ
# ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍເຕັກໂນໂລຊີລະດັບສູງ

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ (ສະບັບປັບປຸງ ປີ 2020) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍເຕັກໂນໂລຊີລະດັບສູງ ໃນວາລະຕອນບ່າຍຂອງກອງປະຊຸມ ຄັ້ງວັນທີ 12 ພະຈິກ 2021 ແລະ ຖືກພິຈາລະນາຮັບຮອງເອົາ ໃນວາລະຕອນບ່າຍ ຄັ້ງວັນທີ 16 ພະຈິກ 2021.

## ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍເຕັກໂນໂລຊີລະດັບສູງ ດ້ວຍຄະແນນຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ສະພາແຫ່ງຊາດ** **ເລກທີ 07 /ສພຊ**

**ນະຄອນຫຼວງວຽງຈັນ, ວັນທີ 16 ພະຈິກ 2021**

# ກົດໝາຍ
# ວ່າດ້ວຍເຕັກໂນໂລຊີລະດັບສູງ

## ພາກທີ I
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ, ຕິດຕາມ ກວດກາວຽກງານເຕັກໂນໂລຊີລະດັບສູງ ເພື່ອໃຫ້ວຽກງານດັ່ງກ່າວ ໄດ້ຮັບການສົ່ງເສີມ ແລະ ພັດທະນາຢ່າງເປັນລະບົບ, ທັນເປັນອຸດສາຫະກຳ ແລະ ທັນສະໄໝ ແນໃສ່ເຮັດໃຫ້ສັງຄົມໄດ້ນຳໃຊ້ເຕັກໂນໂລຊີລະດັບສູງ ທີ່ມີປະສິດທິພາບ, ປະສິດທິຜົນ ແລະ ເປັນມິດຕໍ່ສິ່ງແວດລ້ອມ ຕາມທິດສີຂຽວ ແລະ ຍືນຍົງ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ປົກປັກຮັກສາ ແລະ ພັດທະນາ ປະເທດຊາດ.

### ມາດຕາ 2 ເຕັກໂນໂລຊີລະດັບສູງ

ເຕັກໂນໂລຊີລະດັບສູງ ແມ່ນ ເຕັກໂນໂລຊີທີ່ໄດ້ມາຈາກຜົນສຳເລັດຂອງການຄົ້ນຄວ້າ ແລະ ພັດທະນາ ທາງດ້ານວິທະຍາສາດ ທີ່ກ້າວໜ້າ ແລະ ທັນສະໄໝ ສາມາດສ້າງໄດ້ຜະລິດຕະພັນທີ່ມີຄຸນນະພາບ, ມີຄຸນລັກສະນະໂດດເດັ່ນ, ມີມູນຄ່າເພີ່ມສູງ, ເປັນມິດຕໍ່ສິ່ງແວດລ້ອມ, ມີບົດບາດສຳຄັນຕໍ່ການພັດທະນາຂະແໜງການຜະລິດ, ການບໍລິການໃໝ່ ແລະ ການທັນເປັນທັນສະໄໝ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜະລິດຕະພັນນະວັດຕະກຳ** ໝາຍເຖິງ ຜົນທີ່ໄດ້ຮັບຈາກການຄົ້ນຄວ້າ ແລະ ພັດທະນາ, ການປະດິດສ້າງ ທີ່ມີຄຸນລັກສະນະທາງດ້ານເຕັກນິກທີ່ໂດດເດັ່ນ, ມີປະສິດທິພາບ, ປະສິດທິຜົນ, ມູນຄ່າເພີ່ມສູງ ຕອບສະໜອງໄດ້ຕາມຄວາມຕ້ອງການຂອງຜູ້ຊົມໃຊ້;

2. **ຜະລິດຕະພັນເຕັກໂນໂລຊີລະດັບສູງ** ໝາຍເຖິງ ຜະລິດຕະພັນທີ່ໄດ້ຈາກຜົນຂອງການຄົ້ນຄວ້າເຕັກໂນໂລຊີທີ່ມີຄຸນນະພາບ, ມີຄຸນລັກສະນະໂດດເດັ່ນ, ມີມູນຄ່າເພີ່ມສູງ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

3. **ບຸກຄະລາກອນກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ** ໝາຍເຖິງ ບຸກຄົນ ທີ່ມີລະດັບຄວາມຮູ້ ແລະ ມີຄວາມສາມາດສະເພາະດ້ານ ທີ່ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານເຕັກໂນໂລຊີລະດັບສູງ;

4. **ເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ** ໝາຍເຖິງ ເຕັກໂນໂລຊີທີ່ຮັບໃຊ້ໃນການສ້າງຂໍ້ມູນ ຂ່າວສານ ເປັນລະບົບເອເລັກໂຕຣນິກ, ການຄຳນວນ, ການຈັດລຽງລຳດັບ, ການເກັບຮັກສາ ແລະ ການແລກປ່ຽນຂໍ້ມູນ ຂ່າວສານ ຜ່ານເຄືອຂ່າຍການສື່ສານ ເປັນຕົ້ນ ຄອມພິວເຕີ, ໂທລະສັບ, ອຸປະກອນການສື່ສານ, ອຸປະກອນກະຈາຍສຽງ, ໂທລະພາບ, ເຄືອຂ່າຍ ແລະ ອຸປະກອນເອເລັກໂຕຣນິກອື່ນ ລວມທັງການບໍລິການຕ່າງໆທີ່ກ່ຽວຂ້ອງ;

5. **ເຕັກໂນໂລຊີ ຊີວະພາບ** ໝາຍເຖິງ ການນຳໃຊ້ຄວາມຮູ້ດ້ານວິທະຍາສາດ ກ່ຽວກັບລະບົບຊີວະວິທະຍາ ຫຼື ສ່ວນປະກອບຂອງສິ່ງທີ່ມີຊີວິດ ເພື່ອນຳມາສ້າງ ຫຼື ປ່ຽນແປງ ຜະລິດຕະພັນ ແລະ ຂະບວນການປຸງແຕ່ງສະເພາະໃດໜຶ່ງ;

6. **ເຕັກໂນໂລຊີ ພະລັງງານທົດແທນ ແລະ ວັດສະດຸໃໝ່** ໝາຍເຖິງ ການຄົ້ນຄວ້າ ແລະ ພັດທະນາ, ນຳໃຊ້ແຫຼ່ງພະລັງງານທຳມະຊາດທີ່ໝູນວຽນເກີດຂຶ້ນ, ດັດປັບອັນເກົ່າ ຫຼື ວັດສະດຸທີ່ນຳມາສ້າງ, ປຸງແຕ່ງຂຶ້ນໃໝ່ ເປັນຜະລິດຕະພັນ ຕາມການອອກແບບ ແລະ ໂຄງປະກອບສ້າງ ສະເພາະທີ່ແຕກຕ່າງກັນ;

7. **ເຕັກໂນໂລຊີ ກົນຈັກ ແລະ ອັດຕະໂນມັດ** ໝາຍເຖິງ ການຄົ້ນຄວ້າ ແລະ ພັດທະນາ, ດັດປັບ, ອອກແບບ ແລະ ປະດິດສ້າງ ອຸປະກອນກົນຈັກ ກາຍເປັນເຕັກໂນໂລຊີກົນຈັກທີ່ກ້າວໜ້າ ແລະ ທັນສະໄໝ;

8. **ການບໍລິການໃໝ່** ໝາຍເຖິງ ການພັດທະນາລະບົບການບໍລິການແບບເກົ່າ ກາຍເປັນການບໍລິການແບບໃໝ່ ດ້ວຍການນຳໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ທັນສະໄໝ ເພື່ອອຳນວຍຄວາມສະດວກ, ວ່ອງໄວ ແລະ ປອດໄພ;

9. **ປັນຍາປະດິດ** ໝາຍເຖິງ ວິທະຍາສາດຂະແໜງໜຶ່ງ ຂອງວິທະຍາການຄອມພິວເຕີ ທີ່ຕ້ອງການປະດິດລະບົບເຄື່ອງຈັກອັດຕະໂນມັດດ້ວຍຄອມພິວເຕີ ຫຼື ຫຸ່ນຍົນໃຫ້ສາມາດຄົ້ນຄິດ ຮຽນຮູ້ ແລະ ປັບປຸງຕົວເອງຕະຫຼອດເວລາ ແລະ ມີພຶດຕິກຳຮຽນແບບມະນຸດ.

**ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ**

ລັດ ໃຫ້ຄວາມສຳຄັນຕໍ່ວຽກງານເຕັກໂນໂລຊີລະດັບສູງ ດ້ວຍການສ້າງເງື່ອນໄຂອຳນວຍຄວາມສະດວກ, ນະໂຍບາຍສົ່ງເສີມ ໃຫ້ແກ່ການຄົ້ນຄວ້າ ແລະ ພັດທະນາ, ການປະດິດສ້າງ, ການຜະລິດ, ການບໍລິການວຽກງານເຕັກໂນໂລຊີລະດັບສູງ ແລະ ການນຳໃຊ້ເຕັກໂນໂລຊີລະດັບສູງ ເພື່ອຮັບປະກັນ ສິດ ແລະ ຜົນປະໂຫຍດ, ຄວາມປອດໄພຕໍ່ ຊີວິດ, ສຸຂະພາບ ແລະ ຊັບສິນຂອງປະຊາຊົນ, ການພັດທະນາເສດຖະກິດ-ສັງຄົມ ແລະ ການປົກປັກຮັກສາສິ່ງແວດລ້ອມ, ຄວາມໝັ້ນຄົງ ແລະ ຄວາມສະຫງົບປອດໄພຂອງຊາດ.

ລັດ ຊຸກຍູ້, ສົ່ງເສີມ ການເຄື່ອນໄຫວ ແລະ ການລົງທຶນເຂົ້າໃນວຽກງານເຕັກໂນໂລຊີລະດັບສູງ ດ້ວຍການສ້າງໂຄງລ່າງພື້ນຖານ, ພັດທະນາ ແລະ ປະກອບບຸກຄະລາກອນ, ວັດຖຸປະກອນ, ການເຂົ້າເຖິງແຫຼ່ງທຶນ, ສ້າງເຄືອຂ່າຍ ແລະ ສະໜອງຂໍ້ມູນ ຂ່າວສານ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ.

ລັດ ລົງທຶນເຂົ້າໃນການພັດທະນາບຸກຄະລາກອນ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ ໃຫ້ມີຄວາມຮູ້ຄວາມສາມາດໃນລະດັບພາກພື້ນ ແລະ ສາກົນ ດ້ວຍການນຳໃຊ້ກົນໄກ ແລະ ນະໂຍບາຍ ເປັນບຸລິມະສິດພິເສດ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ລົງທຶນຄົ້ນຄວ້າ ແລະ ພັດທະນາ ເຕັກໂນໂລຊີ ທີ່ກ້າວໜ້າ ແລະ ທັນສະໄໝ, ເໝາະສົມ ແລະ ເປັນມິດຕໍ່ສິ່ງແວດລ້ອມ ດ້ວຍການປະຕິບັດນະໂຍບາຍ ສິນເຊື່ອ, ຍົກເວັ້ນ ຫຼື ຫຼຸດຜ່ອນ ພາສີ, ອາກອນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 5 ຫຼັກການກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ**

ການເຄື່ອນໄຫວວຽກງານເຕັກໂນໂລຊີລະດັບສູງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
2. ນຳໃຊ້ຊັບພະຍາກອນ ຢ່າງມີປະສິດທິພາບ, ປະສິດທິຜົນ, ປະຢັດ ແລະ ເປັນມິດຕໍ່ສິ່ງແວດລ້ອມ, ຕອບສະໜອງການພັດທະນາເສດຖະກິດ-ສັງຄົມ ຕາມທິດສີຂຽວ ແລະ ຍືນຍົງ;
3. ຮັບປະກັນຄວາມປອດໄພຕໍ່ ຊີວິດ, ສຸຂະພາບ, ຊັບສິນ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນ;
4. ຮັບປະກັນການມີສ່ວນຮ່ວມຂອງ ປະຊາຊົນ ແລະ ສັງຄົມ ໃນການຄົ້ນຄວ້າ ແລະ ພັດທະນາ, ຄຸ້ມຄອງ ແລະ ນຳໃຊ້ເຕັກໂນໂລຊີລະດັບສູງ;
5. ຮັບປະກັນຄວາມສະເໝີພາບ, ຍຸຕິທຳ, ໂປ່ງໃສ, ເປີດເຜີຍ ແລະ ສາມາດກວດສອບໄດ້;
6. ຮັບປະກັນຄວາມສະຫງົບ ແລະ ຄວາມໝັ້ນຄົງ ຂອງຊາດ;
7. ສອດຄ່ອງກັບສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

**ມາດຕາ 6 ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ເປີດກວ້າງການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າ ແລະ ພັດທະນາ, ການຈັດຕະຫຼາດນັດ, ການສ້າງ ແລະ ຍົກລະດັບ ທາງດ້ານວິຊາການໃຫ້ບຸກຄະລາກອນ, ການຊ່ວຍເຫຼືອທາງດ້ານວິຊາການ, ທຶນຮອນ ລວມທັງການປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ວຽກງານເຕັກໂນໂລຊີລະດັບສູງ
### ໝວດທີ 1
### ວຽກງານເຕັກໂນໂລຊີລະດັບສູງ

**ມາດຕາ 8 ວຽກງານເຕັກໂນໂລຊີລະດັບສູງ**

ວຽກງານເຕັກໂນໂລຊີລະດັບສູງ ຕົ້ນຕໍ ມີ ດັ່ງນີ້:

1. ການຄົ້ນຄວ້າ ແລະ ພັດທະນາ ເຕັກໂນໂລຊີລະດັບສູງ;
2. ການຖ່າຍທອດ ແລະ ນຳໃຊ້ ເຕັກໂນໂລຊີລະດັບສູງ;
3. ການບໍລິການເຕັກໂນໂລຊີລະດັບສູງ;
4. ການບົ່ມເພາະເຕັກໂນໂລຊີລະດັບສູງ;
5. ການບົ່ມເພາະວິສາຫະກິດເຕັກໂນໂລຊີລະດັບສູງ.

**ມາດຕາ 9 ການຄົ້ນຄວ້າ ແລະ ພັດທະນາ ເຕັກໂນໂລຊີລະດັບສູງ**

ການຄົ້ນຄວ້າ ແລະ ພັດທະນາ ເຕັກໂນໂລຊີລະດັບສູງ ແມ່ນ ການຄົ້ນຄວ້າທາງດ້ານວິທະຍາສາດ, ການນຳໃຊ້, ດັດປັບ ແລະ ປະດິດສ້າງເຕັກໂນໂລຊີລະດັບສູງໃໝ່ ເພື່ອຮັບໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ, ຮັບປະກັນວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການປົກປັກຮັກສາສິ່ງແວດລ້ອມ.

**ມາດຕາ 10 ການຖ່າຍທອດ ແລະ ນຳໃຊ້ ເຕັກໂນໂລຊີລະດັບສູງ**

ການຖ່າຍທອດ ແລະ ນຳໃຊ້ ເຕັກໂນໂລຊີລະດັບສູງ ແມ່ນ ການຖ່າຍທອດ ແລະ ນຳໃຊ້ຜົນສຳເລັດຂອງການຄົ້ນຄວ້າ ແລະ ພັດທະນາ ທາງດ້ານວິທະຍາສາດ ທີ່ກ້າວໜ້າ, ທັນສະໄໝ, ເໝາະສົມ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

ສຳລັບການຖ່າຍທອດເຕັກໂນໂລຊີລະດັບສູງ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ.

**ມາດຕາ 11 ການບໍລິການເຕັກໂນໂລຊີລະດັບສູງ**

ການບໍລິການເຕັກໂນໂລຊີລະດັບສູງ ແມ່ນ ການບໍລິການຜົນຂອງການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີລະດັບສູງ, ການຖ່າຍທອດເຕັກໂນໂລຊີ, ສະໜອງຂໍ້ມູນ ຂ່າວສານ, ໃຫ້ຄຳປຶກສາ, ບຳລຸງສ້າງ, ຍົກລະດັບ, ເຜີຍແຜ່, ນຳໃຊ້ຄວາມຮູ້ດ້ານເຕັກໂນໂລຊີລະດັບສູງ ໃຫ້ແກ່ສັງຄົມໃນຂອບເຂດທົ່ວປະເທດ.

**ມາດຕາ 12 ການບົ່ມເພາະເຕັກໂນໂລຊີລະດັບສູງ**

ການບົ່ມເພາະເຕັກໂນໂລຊີລະດັບສູງ ແມ່ນ ຂະບວນການ ຄົ້ນຄວ້າ ພັດທະນາ ແລະ ດັດປັບຜົນຂອງການຄົ້ນຄວ້າທາງດ້ານວິທະຍາສາດ ຫຼື ດັດປັບຈາກເຕັກໂນໂລຊີລະດັບສູງ ທີ່ຍັງບໍ່ທັນສົມບູນ ໂດຍຜ່ານການຊ່ວຍໜູນຈາກໂຄງລ່າງພື້ນຖານເຕັກນິກ, ແຫຼ່ງກຳລັງແຮງ ແລະ ການບໍລິການ ທີ່ຈຳເປັນຂອງສູນບົ່ມເພາະເຕັກໂນໂລຊີລະດັບສູງ ທີ່ມີຄຸນປະໂຫຍດສູງທາງດ້ານການຄ້າ ເພື່ອນຳໄປພັດທະນາເປັນທຸລະກິດໃໝ່ ແລະ ຜະລິດຕະພັນປະດິດຕະກຳ.

**ມາດຕາ 13 ການບົ່ມເພາະວິສາຫະກິດເຕັກໂນໂລຊີລະດັບສູງ**

ການບົ່ມເພາະວິສາຫະກິດເຕັກໂນໂລຊີລະດັບສູງ ແມ່ນ ຂະບວນການນຳໃຊ້ເຕັກໂນໂລຊີລະດັບສູງເຂົ້າໃນການດຳເນີນທຸລະກິດ ແລະ ບໍລິຫານວິສາຫະກິດ ຂອງສູນບົ່ມເພາະວິສາຫະກິດ ເພື່ອໃຫ້ເກີດເປັນວິສາຫະກິດໃໝ່ ທີ່ມີປະສິດທິພາບ ແລະ ປະສິດທິຜົນ, ເຮັດໃຫ້ໄລຍະເວລາຂະບວນການຜະລິດສັ້ນລົງ, ຄຸນນະພາບຜະລິດຕະພັນສູງຂຶ້ນ, ຫຼຸດຕົ້ນທຶນ ການຜະລິດ ແລະ ການນຳໃຊ້ແຮງງານ.

## ໝວດທີ 2
## ເຕັກໂນໂລຊີລະດັບສູງທີ່ເປັນບຸລິມະສິດລົງທຶນພັດທະນາ

**ມາດຕາ 14 ເຕັກໂນໂລຊີລະດັບສູງທີ່ເປັນບຸລິມະສິດລົງທຶນພັດທະນາ**

ເຕັກໂນໂລຊີລະດັບສູງທີ່ເປັນບຸລິມະສິດລົງທຶນພັດທະນາ ແມ່ນ ເຕັກໂນໂລຊີທີ່ສອດຄ່ອງກັບຄວາມຕ້ອງການ, ທ່າອ່ຽງການພັດທະນາເຕັກໂນໂລຊີທີ່ກ້າວໜ້າ ແລະ ທັນສະໄໝ ຂອງໂລກ, ເສີມຂະຫຍາຍທ່າແຮງທາງດ້ານເຕັກໂນໂລຊີ ຂອງປະເທດ, ສາມາດຈັດຕັ້ງປະຕິບັດໄດ້ໃນຕົວຈິງ ແລະ ຕອບສະໜອງຕາມເງື່ອນໄຂໃດໜຶ່ງ ດັ່ງນີ້:

1. ມີຜົນປະໂຫຍດສູງສຸດ ຕໍ່ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ການປົກປັກຮັກສາສິ່ງແວດລ້ອມ;

2. ປະກອບສ່ວນໃນການຜະລິດ, ການບໍລິການ ເພື່ອຫັນເປັນອຸດສາຫະກຳ ແລະ ທັນສະໄໝ;

3. ເປັນປັດໃຈສຳຄັນ ໃນການສ້າງຕັ້ງຂະແໜງ ການຜະລິດ ແລະ ການບໍລິການໃໝ່ ທີ່ມີກຳລັງແຂ່ງຂັນສູງ ແລະ ປະສິດທິຜົນທາງເສດຖະກິດ-ສັງຄົມ.

**ມາດຕາ 15 ປະເພດເຕັກໂນໂລຊີລະດັບສູງທີ່ເປັນບຸລິມະສິດລົງທຶນພັດທະນາ**

ເຕັກໂນໂລຊີລະດັບສູງທີ່ເປັນບຸລິມະສິດລົງທຶນພັດທະນາ ມີປະເພດ ດັ່ງນີ້:

1. ເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ;
2. ເຕັກໂນໂລຊີ ຊີວະພາບ;
3. ເຕັກໂນໂລຊີ ພະລັງງານທົດແທນ ແລະ ວັດສະດຸໃໝ່;
4. ເຕັກໂນໂລຊີ ກົນຈັກ ແລະ ອັດຕະໂນມັດ;
5. ເຕັກໂນໂລຊີອື່ນ ທີ່ສອດຄ່ອງກັບທ່າອ່ຽງໃນການພັດທະນາເຕັກໂນໂລຊີ ທີ່ກ້າວໜ້າ ແລະ ທັນສະໄໝຂອງໂລກ.

## ພາກທີ III
## ການດຳເນີນວຽກງານເຕັກໂນໂລຊີລະດັບສູງ
### ໝວດທີ 1
### ຂັ້ນຕອນດຳເນີນວຽກງານເຕັກໂນໂລຊີລະດັບສູງ

**ມາດຕາ 16 ການດຳເນີນວຽກງານເຕັກໂນໂລຊີລະດັບສູງ**

ການດຳເນີນວຽກງານເຕັກໂນໂລຊີລະດັບສູງ ແມ່ນ ການດຳເນີນການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີລະດັບສູງ, ການຖ່າຍທອດ ແລະ ນຳໃຊ້ ເຕັກໂນໂລຊີລະດັບສູງ, ການບໍລິການເຕັກໂນໂລຊີລະດັບສູງ, ການບົ່ມເພາະເຕັກໂນໂລຊີລະດັບສູງ ແລະ ການບົ່ມເພາະວິສາຫະກິດເຕັກໂນໂລຊີລະດັບສູງ.

ການດຳເນີນວຽກງານເຕັກໂນໂລຊີລະດັບສູງ ໃຫ້ປະຕິບັດຕາມຂັ້ນຕອນທີ່ໄດ້ກຳນົດໄວ້ໃນມາດຕາ 17, 18 ແລະ 19 ຂອງກົດໝາຍສະບັບນີ້.

**ມາດຕາ 17 ການຂໍອະນຸຍາດດຳເນີນວຽກງານເຕັກໂນໂລຊີລະດັບສູງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງດຳເນີນວຽກງານເຕັກໂນໂລຊີລະດັບສູງ ຕ້ອງຍື່ນຄຳຮ້ອງຕໍ່ ອົງການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ ເພື່ອພິຈາລະນາ ອອກໃບອະນຸຍາດໃຫ້ດຳເນີນວຽກງານເຕັກໂນໂລຊີລະດັບສູງ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ດຳເນີນທຸລະກິດກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍວິສາຫະກິດ.

**ມາດຕາ 18 ເອກະສານປະກອບ ການຂໍອະນຸຍາດດຳເນີນວຽກງານເຕັກໂນໂລຊີລະດັບສູງ**

ເອກະສານປະກອບ ການຂໍອະນຸຍາດດຳເນີນວຽກງານເຕັກໂນໂລຊີລະດັບສູງ ມີ ດັ່ງນີ້:

1. ຄຳຮ້ອງຕາມແບບພິມ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ບົດສະເໜີໂຄງການ;
3. ບົດວິພາກເສດຖະກິດ-ເຕັກນິກ ຫຼື ແຜນດຳເນີນງານ;
4. ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ.
5. ເອກະສານອື່ນທີ່ກ່ຽວຂ້ອງ.

**ມາດຕາ 19 ການພິຈາລະນາ ການຂໍອະນຸຍາດດຳເນີນວຽກງານເຕັກໂນໂລຊີລະດັບສູງ**

ອົງການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ຕ້ອງພິຈາລະນາອອກໃບອະນຸຍາດໃຫ້ຜູ້ຮ້ອງຂໍພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ. ຖ້າວ່າຄຳຮ້ອງ ແລະ ເອກະສານປະກອບ ຫາກບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນນັ້ນ, ອົງການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍພາຍໃນເວລາ ສິບວັນ ລັດຖະການ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ ເພື່ອໃຫ້ຜູ້ກ່ຽວແກ້ໄຂໃຫ້ຖືກຕ້ອງ ແລະ ຄົບຖ້ວນ.

ໃນກໍລະນີການຮ້ອງຂໍຫາກບໍ່ໄດ້ຮັບການອະນຸຍາດແລ້ວ ອົງການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍຊາບ ພ້ອມດ້ວຍເຫດຜົນ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນຕົກລົງບໍ່ເຫັນດີອະນຸມັດ ເປັນຕົ້ນໄປ.

## ໝວດທີ 2
## ສິດ ແລະ ພັນທະ ຂອງຜູ້ດຳເນີນວຽກງານເຕັກໂນໂລຊີລະດັບສູງ

**ມາດຕາ 20 ຜູ້ດຳເນີນວຽກງານເຕັກໂນໂລຊີລະດັບສູງ**

ຜູ້ດຳເນີນວຽກງານເຕັກໂນໂລຊີລະດັບສູງ ແມ່ນ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນວຽກງານ ການຄົ້ນຄວ້າ ແລະ ພັດທະນາ ເຕັກໂນໂລຊີລະດັບສູງ, ການຖ່າຍທອດ ແລະ ນຳໃຊ້ ເຕັກໂນໂລຊີລະດັບສູງ, ການບໍລິການເຕັກໂນໂລຊີລະດັບສູງ, ການບົ່ມເພາະເຕັກໂນໂລຊີລະດັບສູງ, ການບົ່ມເພາະວິສາຫະກິດເຕັກໂນໂລຊີລະດັບສູງ ແລະ ວຽກງານເຕັກໂນໂລຊີລະດັບສູງອື່ນ.

**ມາດຕາ 21 ສິດ ຂອງຜູ້ດຳເນີນວຽກງານເຕັກໂນໂລຊີລະດັບສູງ**

ຜູ້ດຳເນີນວຽກງານເຕັກໂນໂລຊີລະດັບສູງ ມີສິດ ດັ່ງນີ້:

1. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ທີ່ຖືກຕ້ອງຕາມກົດໝາຍ;
2. ຄົ້ນຄວ້າ ເສີມຂະຫຍາຍສະຕິປັນຍາ ໃຫ້ມີຫົວຄິດປະດິດສ້າງ;
3. ນຳໃຊ້ຄວາມກ້າວໜ້າທາງດ້ານເຕັກໂນໂລຊີລະດັບສູງ;
4. ໃຫ້ການບໍລິການດ້ານວຽກງານເຕັກໂນໂລຊີລະດັບສູງ ທີ່ໄດ້ຮັບອະນຸຍາດ;
5. ໂຈະ ຫຼື ຢຸດເຊົາ ການໃຫ້ການບໍລິການ;
6. ຖ່າຍທອດ, ມອບໂອນ, ຈັດພິມ, ເຜີຍແຜ່ ຜົນສຳເລັດວຽກງານເຕັກໂນໂລຊີລະດັບສູງ;
7. ເຂົ້າຮ່ວມການເຄື່ອນໄຫວວຽກງານເຕັກໂນໂລຊີລະດັບສູງ;
8. ໃຫ້ຄຳປຶກສາວຽກງານເຕັກໂນໂລຊີລະດັບສູງ;
9. ປະກອບຄຳເຫັນຕໍ່ຮ່າງນິຕິກຳກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

10. ກວດກາ, ຕິດຕາມການຈັດຕັ້ງປະຕິບັດວຽກງານເຕັກໂນໂລຊີລະດັບສູງ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນ;

11. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 22 ພັນທະ ຂອງຜູ້ດຳເນີນວຽກງານເຕັກໂນໂລຊີລະດັບສູງ**

ຜູ້ດຳເນີນວຽກງານເຕັກໂນໂລຊີລະດັບສູງ ມີພັນທະ ດັ່ງນີ້:

1. ຮັບປະກັນການດຳເນີນວຽກງານເຕັກໂນໂລຊີລະດັບສູງໃຫ້ມີຄຸນນະພາບ, ມີຄວາມສະດວກ, ວ່ອງໄວ, ຖືກຕ້ອງ ແລະ ເປັນທຳ;

2. ສ້າງແຜນຟື້ນຟູ, ບຳລຸງຮັກສາ ແລະ ປົກປັກຮັກສາສິ່ງແວດລ້ອມ;

3. ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນ ໃຫ້ແກ່ອົງການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ;

4. ປະຕິບັດພັນທະດ້ານການເງິນໃຫ້ລັດ ທີ່ໄດ້ມາຈາກການດຳເນີນວຽກງານເຕັກໂນໂລຊີລະດັບສູງ;

5. ສ້າງບຸກຄະລາກອນ ແລະ ສະໜອງການບໍລິການດ້ານເຕັກໂນໂລຊີລະດັບສູງ;

6. ພັດທະນາທ້ອງຖິ່ນ ແລະ ຊຸມຊົນ ບ່ອນດຳເນີນວຽກງານເຕັກໂນໂລຊີລະດັບສູງຕັ້ງຢູ່;

7. ແຈ້ງໃຫ້ອົງການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ແລະ ພາກສ່ວນທີ່ກ່ຽວຂ້ອງ ໃນກໍລະນີມີການໂຈະ ຫຼື ຢຸດເຊົາ ການໃຫ້ການບໍລິການຂອງຕົນ;

8. ລາຍງານ ສະພາບການດຳເນີນວຽກງານເຕັກໂນໂລຊີລະດັບສູງແຕ່ລະໄລຍະຕໍ່ອົງການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ;

9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ພາກທີ IV
## ການພັດທະນາເຕັກໂນໂລຊີລະດັບສູງ

**ມາດຕາ 23 ການພັດທະນາເຕັກໂນໂລຊີລະດັບສູງ**

ການພັດທະນາເຕັກໂນໂລຊີລະດັບສູງ ມີຂົງເຂດ ດັ່ງນີ້:

1. ຂົງເຂດເສດຖະກິດ;
2. ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
3. ຂົງເຂດວັດທະນະທຳ-ສັງຄົມ;
4. ຂົງເຂດອື່ນ.

ສຳລັບການພັດທະນະເຕັກໂນໂລຊີລະດັບສູງ ໃນຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ວັດທະນະທຳ-ສັງຄົມ ແລະ ຂົງເຂດອື່ນ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 24 ການພັດທະນາເຕັກໂນໂລຊີລະດັບສູງ ໃນຂົງເຂດເສດຖະກິດ**

ການພັດທະນາເຕັກໂນໂລຊີລະດັບສູງ ໃນຂົງເຂດເສດຖະກິດ ມີ ດັ່ງນີ້:

1. ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງອຸດສາຫະກຳ;
2. ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງກະສິກຳ;

3. ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງບໍລິການ.

**ມາດຕາ 25 ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງອຸດສາຫະກຳ**

ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງອຸດສາຫະກຳ ມີ ດັ່ງນີ້:

1. ການຜະລິດ ຜະລິດຕະພັນກົນຈັກອັດຕະໂນມັດ, ເອເລັກໂຕຣນິກ, ເຕັກໂນໂລຊີຂໍ້ມູນ ຂ່າວສານ, ສະໜອງການບໍລິການ ທີ່ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ;

2. ພັດທະນາວິສາຫະກິດທີ່ນຳໃຊ້ຜົນສຳເລັດຂອງການຄົ້ນຄວ້າ ແລະ ພັດທະນາ ຂອງການບໍລິການ ຢ່າງເປັນລະບົບທີ່ກ້າວໜ້າ ແລະ ທັນສະໄໝ;

3. ການສ້າງບຸກຄະລາກອນ;

4. ການຊຸກຍູ້ ແລະ ຮັບໃຊ້ ເຂົ້າໃນການຜະລິດອຸດສາຫະກຳໃຫ້ມີຄຸນນະພາບສູງ.

ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງອຸດສາຫະກຳ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 26 ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງກະສິກຳ**

ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງກະສິກຳ ມີ ດັ່ງນີ້:

1. ການຄັດເລືອກ, ປະດິດສ້າງ, ຂະຫຍາຍແນວພັນພືດ, ສັດ ທີ່ມີປະສິດທິພາບ ແລະ ຄຸນນະພາບສູງ;

2. ການປ້ອງກັນ ແລະ ຄວບຄຸມການແຜ່ລະບາດຂອງພະຍາດ;

3. ການປູກຝັງ ແລະ ລ້ຽງສັດ ທີ່ມີປະສິດທິຜົນສູງ;

4. ການປະດິດສ້າງວັດສະດຸ, ເຄື່ອງກົນຈັກ ແລະ ອຸປະກອນຮັບໃຊ້;

5. ການເກັບຮັກສາ ແລະ ການປຸງແຕ່ງຜະລິດຕະພັນກະສິກຳ;

6. ການສ້າງບຸກຄະລາກອນ;

7. ການພັດທະນາວິສາຫະກິດກະສິກຳ;

8. ການບໍລິການ.

ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງກະສິກຳ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

**ມາດຕາ 27 ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງບໍລິການ**

ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງບໍລິການ ມີ ດັ່ງນີ້:

1. ການຄົ້ນຄວ້າ, ການເລືອກເຟັ້ນ ແລະ ການນຳໃຊ້ ເຕັກໂນໂລຊີລະດັບສູງ, ເຕັກໂນໂລຊີການສື່ສານ ຂໍ້ມູນ ຂ່າວສານ ທີ່ທັນສະໄໝເຂົ້າໃນ ການຄ້າ, ຄົມມະນາຄົມ, ການເງິນ, ສາທາລະນະສຸກ, ການສຶກສາ, ການທ່ອງທ່ຽວ ແລະ ຂະແໜງອື່ນ;

2. ການສ້າງບຸກຄະລາກອນ;

3. ການສົ່ງເສີມການນຳໃຊ້ປັນຍາປະດິດ ເຂົ້າໃນການບໍລິການຢ່າງມີປະສິດທິຜົນ;

4. ການບໍລິການ ເຕັກໂນໂລຊີ ການສື່ສານ ຂໍ້ມູນ ຂ່າວສານ, ອາວະກາດ, ພູມີສາດ ແລະ ເຕັກໂນໂລຊີລະດັບສູງອື່ນ.

ການພັດທະນາເຕັກໂນໂລຊີລະດັບສູງ ໃນຂະແໜງບໍລິການ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

# ພາກທີ V
# ການສົ່ງເສີມເຕັກໂນໂລຊີລະດັບສູງ

**ມາດຕາ 28 ການສົ່ງເສີມດ້ານນະໂຍບາຍເຕັກໂນໂລຊີລະດັບສູງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ດຳເນີນວຽກງານເຕັກໂນໂລຊີລະດັບສູງທົ່ວໄປ ຈະໄດ້ຮັບນະໂຍບາຍສົ່ງເສີມໃນການຄົ້ນຄວ້າ, ການພັດທະນາເຕັກໂນໂລຊີລະດັບສູງ, ການປະດິດສ້າງ, ການນຳໃຊ້ ແລະ ການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 29 ການສົ່ງເສີມດ້ານການພັດທະນາຊັບພະຍາກອນມະນຸດ**

ການສົ່ງເສີມດ້ານການພັດທະນາຊັບພະຍາກອນມະນຸດ ດຳເນີນຕາມແຜນພັດທະນາ ແລະ ນຳໃຊ້ ບຸກຄະລາກອນ, ຈັດແບ່ງງົບປະມານໃນການສ້າງໂຄງລ່າງພື້ນຖານອັນຈຳເປັນ, ສິ່ງອຳນວຍຄວາມສະດວກ, ສະຖານທີ່ຝຶກອົບຮົມ ແລະ ໃຫ້ທຶນການສຶກສາໃນການສ້າງ, ບຳລຸງ, ຍົກລະດັບດ້ານວິຊາສະເພາະ, ເຕັກນິກວິຊາການດ້ານການຄຸ້ມຄອງ, ການຄົ້ນຄວ້າ ແລະ ການບໍລິການເຕັກໂນໂລຊີລະດັບສູງ.

**ມາດຕາ 30 ການສົ່ງເສີມດ້ານການພັດທະນາການຕະຫຼາດເຕັກໂນໂລຊີລະດັບສູງ**

ການສົ່ງເສີມດ້ານການພັດທະນາການຕະຫຼາດເຕັກໂນໂລຊີລະດັບສູງ ມີຂຸບການ ດັ່ງນີ້:

1. ລົງທຶນກໍ່ສ້າງໂຄງລ່າງພື້ນຖານໃຫ້ແກ່ ຕະຫຼາດ, ສະຖານທີ່ວາງສະແດງ, ສູນແລກປ່ຽນຂໍ້ມູນຂ່າວສານ ເຕັກໂນໂລຊີລະດັບສູງ;

2. ນຳສະເໜີ, ຊື້ ຂາຍ, ສະໜອງການບໍລິການເປັນຄົນກາງ, ຕີລາຄາ, ກຳນົດລາຄາ, ປະເມີນເຕັກໂນໂລຊີລະດັບສູງ;

3. ບໍລິການໃຫ້ຄຳປຶກສາດ້ານ ເຕັກນິກ, ການລົງທຶນ, ກົດໝາຍ, ການເງິນ, ການປະກັນໄພ, ການປົກປ້ອງຊັບສິນທາງປັນຍາດ້ານເຕັກໂນໂລຊີລະດັບສູງ ແລະ ການບໍລິການອື່ນ;

4. ຈັດຕັ້ງ ແລະ ຊຸກຍູ້ ການເຂົ້າຮ່ວມຕະຫຼາດນັດ ແລະ ງານວາງສະແດງສິນຄ້າເຕັກໂນໂລຊີລະດັບສູງ ທັງພາຍໃນ ແລະ ຕ່າງປະເທດ.

**ມາດຕາ 31 ການສົ່ງເສີມດ້ານການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີລະດັບສູງ**

ການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີລະດັບສູງ ທີ່ນຳໃຊ້, ດັດປັບ ເພື່ອປ່ຽນແທນເຕັກໂນໂລຊີທີ່ນຳເຂົ້າຈາກຕ່າງປະເທດ ແລະ ການປະດິດສ້າງເຕັກໂນໂລຊີລະດັບສູງໃໝ່ ຈະໄດ້ຮັບນະໂຍບາຍສົ່ງເສີມ ດັ່ງນີ້:

1. ນະໂຍບາຍຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
2. ການສະໜັບສະໜູນຈາກກອງທຶນພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ;
3. ການສະໜັບສະໜູນຈາກສາທົນ ແລະ ແຫຼ່ງທຶນອື່ນ ທີ່ຖືກຕ້ອງຕາມກົດໝາຍ.

**ມາດຕາ 32 ການສົ່ງເສີມດ້ານການຖ່າຍທອດເຕັກໂນໂລຊີລະດັບສູງ**

ການຖ່າຍທອດເຕັກໂນໂລຊີລະດັບສູງ ຈະໄດ້ຮັບນະໂຍບາຍສົ່ງເສີມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້, ກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

# ພາກທີ VI
# ເຂດເຕັກໂນໂລຊີລະດັບສູງ

**ມາດຕາ 33 ເຂດເຕັກໂນໂລຊີລະດັບສູງ**

ເຂດເຕັກໂນໂລຊີລະດັບສູງ ແມ່ນ ສະຖານທີ່ຈຸດສຸມຂອງການຄົ້ນຄວ້າ ແລະ ພັດທະນາ, ນໍາໃຊ້ນະວັດຕະກໍາໃນການຜະລິດເປັນສິນຄ້າ, ການບົ່ມເພາະເຕັກໂນໂລຊີ, ການບົ່ມເພາະວິສາຫະກິດເຕັກໂນໂລຊີ, ສູນນະວັດຕະກໍາ, ການສ້າງບຸກຄະລາກອນ, ການຜະລິດຜະລິດຕະພັນ, ການບໍລິການ, ທຸລະກິດທີ່ປະຢັດຊັບພະຍາກອນທໍາມະຊາດ ແລະ ພະລັງງານ ເພື່ອສົ່ງເສີມການລົງທຶນ ແລະ ຮັບປະກັນການພັດທະນາຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 34 ການສ້າງຕັ້ງເຂດເຕັກໂນໂລຊີລະດັບສູງ**

ລັດຖະບານ ເປັນຜູ້ພິຈາລະນາຕົກລົງ ສ້າງຕັ້ງເຂດເຕັກໂນໂລຊີລະດັບສູງ ຕາມການສະເໜີຂອງຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ບົນພື້ນຖານການຄົ້ນຄວ້າຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ ໂດຍມີການສົມທົບກັບກະຊວງ ແລະ ອົງການອື່ນທີ່ກ່ຽວຂ້ອງ.

ນິຕິບຸກຄົນ ທີ່ມີຈຸດປະສົງພັດທະນາເຂດເຕັກໂນໂລຊີລະດັບສູງ ໃຫ້ຍື່ນຄໍາຮ້ອງຂໍລົງທຶນພັດທະນາ ພ້ອມດ້ວຍເອກະສານຄົບຊຸດ ຕໍ່ຫ້ອງການບໍລິການ ການລົງທຶນຜ່ານປະຕູດຽວຂັ້ນສູນກາງ ເພື່ອຄົ້ນຄວ້າຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 35 ເງື່ອນໄຂການສ້າງຕັ້ງເຂດເຕັກໂນໂລຊີລະດັບສູງ**

ການສ້າງຕັ້ງເຂດເຕັກໂນໂລຊີລະດັບສູງ ມີເງື່ອນໄຂ ດັ່ງນີ້:

1. ກໍານົດແຈ້ງວັດຖຸປະສົງຂອງເຂດເຕັກໂນໂລຊີລະດັບສູງ;
2. ມີທີ່ຕັ້ງທີ່ເໝາະສົມ, ກໍານົດເນື້ອທີ່ ແລະ ເຂດແດນຢ່າງຈະແຈ້ງ;
3. ກໍານົດອາຍຸສໍາປະທານທີ່ດິນທີ່ເຂດຕັ້ງຢູ່;
4. ກໍານົດແຈ້ງຜົນປະໂຫຍດຂອງລັດ, ຜູ້ພັດທະນາ ແລະ ປະຊາຊົນ;
5. ກໍານົດນະໂຍບາຍສົ່ງເສີມທີ່ຈະແຈ້ງ;
6. ຜ່ານການປະເມີນດ້ານເສດຖະກິດ-ເຕັກນິກ, ສິ່ງແວດລ້ອມ ແລະ ສັງຄົມຈາກພາກສ່ວນທີ່ກ່ຽວຂ້ອງ;
7. ສອດຄ່ອງກັບແຜນການພັດທະນາຂອງ ລັດຖະບານ, ແຂວງ, ນະຄອນຫຼວງ;
8. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
9. ຮັບປະກັນການພັດທະນາແບບຍືນຍົງ, ປົກປັກຮັກສາສິ່ງແວດລ້ອມ, ສິ່ງເສີມ ແລະ ອະນຸລັກວັດທະນະທໍາອັນດີງາມຂອງຊາດ.

**ມາດຕາ 36 ຫຼັກການການເຄື່ອນໄຫວຂອງເຂດເຕັກໂນໂລຊີລະດັບສູງ**

ເຂດເຕັກໂນໂລຊີລະດັບສູງ ເຄື່ອນໄຫວຕາມຫຼັກການພື້ນຖານ ດັ່ງນີ້:

1. ເຄົາລົບ ແລະ ປະຕິບັດລັດຖະທໍາມະນູນ, ກົດໝາຍ, ສັນຍາສໍາປະທານທີ່ດິນ ແລະ ນະໂຍບາຍສົ່ງເສີມພິເສດຕາມກົດໝາຍ;
2. ຮັບປະກັນການພັດທະນາແບບຍືນຍົງ, ປົກປັກຮັກສາສິ່ງແວດລ້ອມ, ສິ່ງເສີມ ແລະ ອະນຸລັກວັດທະນະທໍາຂອງຊາດ;

3. ຄຸ້ມຄອງບໍລິຫານຕາມກົນໄກການບໍລິການການລົງທຶນຜ່ານປະຕູດຽວ, ວ່ອງໄວ ແລະ ໂປ່ງໃສ;

4. ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພພາຍໃນເຂດເຕັກໂນໂລຊີລະດັບສູງ.

**ມາດຕາ 37 ອາຍຸສໍາປະທານທີ່ດິນຂອງເຂດເຕັກໂນໂລຊີລະດັບສູງ**

ອາຍຸສໍາປະທານທີ່ດິນ ຂອງເຂດເຕັກໂນໂລຊີລະດັບສູງ ໃຫ້ອີງໃສ່ ລັກສະນະ, ປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ ແລະ ບົດວິພາກເສດຖະກິດ-ເຕັກນິກຂອງກິດຈະການ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ແຕ່ສູງສຸດ ບໍ່ໃຫ້ເກີນ ຫ້າສິບປີ.

ອາຍຸສໍາປະທານທີ່ດິນ ຂອງເຂດເຕັກໂນໂລຊີລະດັບສູງ ສາມາດຕໍ່ໄດ້ ຕາມການຕົກລົງຂອງລັດຖະບານ ຫຼື ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ໂດຍອີງຕາມການປະເມີນຜົນການເຄື່ອນໄຫວໂຄງການ ຫຼື ກິດຈະການ ແລະ ການຕົກລົງ ຂອງລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ.

**ມາດຕາ 38 ນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ ຂອງເຂດເຕັກໂນໂລຊີລະດັບສູງ**

ຜູ້ພັດທະນາ ແລະ ຜູ້ລົງທຶນໃນເຂດເຕັກໂນໂລຊີລະດັບສູງ ໄດ້ຮັບນະໂຍບາຍສົ່ງເສີມສະເພາະດ້ານພາສີ, ສ່ວຍສາອາກອນ ແລະ ໄດ້ຮັບການປະຕິບັດນະໂຍບາຍອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 39 ນະໂຍບາຍພິເສດດ້ານອາກອນກໍາໄລ**

ຜູ້ພັດທະນາ ແລະ ຜູ້ລົງທຶນ ໃນເຂດເຕັກໂນໂລຊີລະດັບສູງ ຈະໄດ້ຮັບນະໂຍບາຍພິເສດດ້ານອາກອນກໍາໄລ ດັ່ງນີ້:

1. ຜູ້ພັດທະນາ ຈະໄດ້ຮັບນະໂຍບາຍພິເສດ ຊຶ່ງໄດ້ຮັບການຍົກເວັ້ນອາກອນກໍາໄລ ແປດປີ, ພາຍຫຼັງສິ້ນສຸດໄລຍະຍົກເວັ້ນອາກອນກໍາໄລແລ້ວ ຈະໄດ້ເສຍ ສາມສິບສ່ວນຮ້ອຍ (30%) ຂອງອັດຕາອາກອນກໍາໄລ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອາກອນລາຍໄດ້ ພາຍໃນເວລາ ຫ້າປີ, ຫຼັງຈາກນັ້ນໃຫ້ເສຍອັດຕາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອາກອນລາຍໄດ້.

2. ຜູ້ລົງທຶນ ຈະໄດ້ຮັບນະໂຍບາຍພິເສດ ຊຶ່ງໄດ້ຮັບການຍົກເວັ້ນອາກອນກໍາໄລ ເກົ້າປີ, ພາຍຫຼັງສິ້ນສຸດໄລຍະຍົກເວັ້ນອາກອນກໍາໄລແລ້ວ ຈະໄດ້ເສຍ ສາມສິບສ່ວນຮ້ອຍ (30%) ຂອງອັດຕາອາກອນກໍາໄລ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອາກອນລາຍໄດ້ ພາຍໃນເວລາ ຫ້າປີ, ຫຼັງຈາກນັ້ນ ໃຫ້ເສຍອັດຕາ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍອາກອນລາຍໄດ້.

**ມາດຕາ 40 ສິດຂອງຜູ້ພັດທະນາເຂດເຕັກໂນໂລຊີລະດັບສູງ**

ຜູ້ພັດທະນາເຂດເຕັກໂນໂລຊີລະດັບສູງ ມີສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍພິເສດ ແລະ ການອໍານວຍຄວາມສະດວກ ໃນການພັດທະນາເຂດເຕັກໂນໂລຊີລະດັບສູງ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້;

2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ທີ່ໄດ້ມາຈາກການລົງທຶນພັດທະນາຂອງຕົນ;

3. ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ການພັດທະນາ, ນໍາໃຊ້ທີ່ດິນຕາມອາຍຸສັນຍາພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

4. ເປັນເຈົ້າກໍາມະສິດຕໍ່ຊັບສິນຂອງຕົນ ເປັນຕົ້ນ ຕຶກ, ອາຄານ ຫຼື ສິ່ງປຸກສ້າງ ໃນທີ່ດິນທີ່ໄດ້ຮັບສໍາປະທານ, ມີສິດໂອນກໍາມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;

5. ໄດ້ຮັບສິດອື່ນ ຕາມທີ່ໄດ້ກໍານົດໄວ້ ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 41 ພັນທະຂອງຜູ້ພັດທະນາເຂດເຕັກໂນໂລຊີລະດັບສູງ**

ຜູ້ພັດທະນາເຂດເຕັກໂນໂລຊີລະດັບສູງ ມີພັນທະ ດັ່ງນີ້:

1. ສ້າງຕັ້ງບໍລິສັດ ເພື່ອດຳເນີນໂຄງການຕາມສັນຍາພັດທະນາ;

2. ປະຕິບັດຕາມສັນຍາພັດທະນາ, ແຜນແມ່ບົດການພັດທະນາ, ບົດວິພາກເສດຖະກິດ-ເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ;

3. ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຢ່າງຄົບຖ້ວນ ຕາມສັນຍາພັດທະນາ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

4. ຮ່ວມມືກັບອົງການປົກຄອງທ້ອງຖິ່ນ, ສົ່ງເສີມການມີສ່ວນຮ່ວມ ໃນການພັດທະນາຂອງປະຊາຊົນ ບ່ອນເຂດເຕັກໂນໂລຊີລະດັບສູງຕັ້ງຢູ່ ແລະ ປະກອບສ່ວນພັດທະນາທ້ອງຖິ່ນດັ່ງກ່າວ;

5. ສະເໜີຂໍອະນຸມັດນຳຄະນະຄຸ້ມຄອງເຂດ ຕາມລະບຽບການ ກ່ຽວກັບການລົງທຶນພັດທະນາ ເພື່ອດຳເນີນກິດຈະການໃດໜຶ່ງ ຢູ່ໃນເຂດເຕັກໂນໂລຊີລະດັບສູງ;

6. ສົ່ງເສີມການນຳໃຊ້ແຮງງານລາວ ໂດຍສະເພາະແຮງງານຍິງ ແລະ ຊົນເຜົ່າ; ເອົາໃຈໃສ່ໃນການພັດທະນາສີມືແຮງງານ, ຍົກລະດັບວິຊາສະເພາະ ແລະ ຖ່າຍທອດເຕັກໂນໂລຊີລະດັບສູງ ໃຫ້ແກ່ຜູ້ອອກແຮງງານລາວ;

7. ປະກອບສ່ວນທາງດ້ານງົບປະມານ ໃນວຽກງານຕິດຕາມ ກວດກາໂຄງການລົງທຶນພັດທະນາຂອງຕົນ;

8. ສະຫຼຸບ ແລະ ລາຍງານການດຳເນີນວຽກງານກ່ຽວກັບການພັດທະນາເຂດເຕັກໂນໂລຊີລະດັບສູງ ຕໍ່ຄະນະຄຸ້ມຄອງເຂດເຕັກໂນໂລຊີລະດັບສູງ ແລະ ຂະແໜງການທີ່ກ່ຽວຂ້ອງ ເປັນແຕ່ລະໄລຍະ;

9. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 42 ສິດຂອງຜູ້ລົງທຶນ**

ຜູ້ລົງທຶນໃນເຂດເຕັກໂນໂລຊີລະດັບສູງ ມີສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍພິເສດ ແລະ ການອຳນວຍຄວາມສະດວກ ໃນການລົງທຶນເຂດເຕັກໂນໂລຊີລະດັບສູງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້;

2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນພັດທະນາຂອງຕົນ;

3. ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ການລົງທຶນ, ນຳໃຊ້ທີ່ດິນຕາມອາຍຸສັນຍາລົງທຶນພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ;

4. ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ ເປັນຕົ້ນ ຕຶກ, ອາຄານ ຫຼື ສິ່ງປຸກສ້າງ ໃນທີ່ດິນທີ່ໄດ້ຮັບສຳປະທານ, ມີສິດໂອນກຳມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;

5. ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**ມາດຕາ 43 ພັນທະຂອງຜູ້ລົງທຶນ**

ຜູ້ລົງທຶນໃນເຂດເຕັກໂນໂລຊີລະດັບສູງ ມີພັນທະ ດັ່ງນີ້:

1. ໂຄງລ່າງພື້ນຖານ ແລະ ສິ່ງອຳນວຍຄວາມສະດວກ ເພື່ອຮັບປະກັນໃຫ້ແກ່ການຄົ້ນຄວ້າ ແລະ ພັດທະນາ, ຜະລິດ ແລະ ບໍລິການ ເຕັກໂນໂລຊີລະດັບສູງ;

2. ຊຸກຍູ້ຊັບພະຍາກອນມະນຸດທີ່ເປັນມືອາຊີບ (ຊ່ຽວຊານ) ແລະ ມີບຸກຄະລາກອນບໍລິຫານວຽກງານຄົ້ນຄວ້າ ແລະ ພັດທະນາ, ການຜະລິດ ແລະ ບໍລິການ;

3. ພັດທະນາ ແລະ ນຳໃຊ້ເຕັກໂນໂລຊີລະດັບສູງທີ່ກ້າວໜ້າ ແລະ ທັນສະໄໝ ເຂົ້າໃນການຄົ້ນຄວ້າ ແລະ ພັດທະນາ, ຜະລິດ ແລະ ບໍລິການ ສອດຄ່ອງກັບການພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ;

4. ຄົ້ນຄວ້າ ແລະ ພັດທະນາ, ຜະລິດ ແລະ ບໍລິການ ເຕັກໂນໂລຊີລະດັບສູງ ທີ່ມີປະສິດທິພາບ, ຄຸນນະພາບ, ຜົນປະໂຫຍດຕໍ່ສັງຄົມ ແລະ ເປັນມິດຕໍ່ສິ່ງແວດລ້ອມ;

5. ຖ່າຍທອດເຕັກໂນໂລຊີລະດັບສູງ ດ້ວຍຮູບການຍົກລະດັບ, ຝຶກອົບຮົມ ຊັບພະຍາກອນມະນຸດ;

6. ຈັດງານວາງສະແດງ-ຕະຫຼາດນັດ ເພື່ອເຜີຍແຜ່ຜະລິດຕະພັນເຕັກໂນໂລຊີລະດັບສູງ ທີ່ໄດ້ມາຈາກຜົນສຳເລັດຂອງການຄົ້ນຄວ້າ ແລະ ນຳໃຊ້ຕົວຈິງ;

ພັນທະອື່ນ ໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

## ມາດຕາ 44 ການຄຸ້ມຄອງເຂດເຕັກໂນໂລຊີລະດັບສູງ

ລັດຖະບານ ເປັນຜູ້ຄຸ້ມຄອງເຂດເຕັກໂນໂລຊີລະດັບສູງຢ່າງລວມສູນ ເປັນເອກະພາບໃນທົ່ວປະເທດ ໂດຍມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການອື່ນ ເປັນຕົ້ນ ຂະແໜງການການເງິນ, ຂະແໜງການແຜນການ ແລະ ການລົງທຶນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ສຳລັບເນື້ອໃນຂອງການຄຸ້ມຄອງເຂດເຕັກໂນໂລຊີລະດັບສູງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

# ພາກທີ VII
# ຂໍ້ຫ້າມ

## ມາດຕາ 45 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນວຽກງານເຕັກໂນໂລຊີລະດັບສູງ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສ້າງອຸປະສັກ, ຂັດຂວາງ, ເມີນເສີຍ, ໃຊ້ຄວາມຮຸນແຮງ ບັງຄັບ, ນາບຂູ່ ການເຄື່ອນໄຫວວຽກງານ ຫຼື ການປະຕິບັດໜ້າທີ່ຂອງ ພະນັກງານ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

3. ສ້າງອຸປະສັກ, ຂັດຂວາງການສົ່ງເສີມ, ຄົ້ນຄວ້າ ແລະ ພັດທະນາວຽກງານເຕັກໂນໂລຊີລະດັບສູງ;

4. ນຳເຂົ້າເຕັກໂນໂລຊີລະດັບສູງ ທີ່ບໍ່ໄດ້ມາດຕະຖານ ຊຶ່ງເຮັດໃຫ້ສິ້ນເປືອງແຫຼ່ງຊັບພະຍາກອນທຳມະຊາດ ແລະ ທຳລາຍສິ່ງແວດລ້ອມ, ສ້າງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ວັດທະນະທຳອັນດີງາມຂອງຊາດ;

5. ແອບອ້າງເອົາຜົນງານການຄົ້ນຄວ້າຂອງຜູ້ອື່ນ ມາເປັນຂອງຕົນ;

6. ຜະລິດ, ດັດແປງ, ນຳໃຊ້ ເຕັກນິກ, ເຕັກໂນໂລຊີລະດັບສູງ ທີ່ບໍ່ຖືກຕ້ອງ ແລະ ກໍ່ໃຫ້ເກີດອັນຕະລາຍຕໍ່ສັງຄົມ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 46 ຂໍ້ຫ້າມ ສໍາລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງຂອງລັດ ມີພຶດຕິກໍາ ດັ່ງນີ້:

1. ສວຍໃຊ້ອໍານາດ, ໜ້າທີ່, ຕໍາແໜ່ງ, ບັງຄັບ, ນາບຂູ່ຜູ້ອື່ນ, ຂໍເອົາ, ທວງເອົາ ຫຼື ຮັບສິນບົນ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;

2. ເປີດເຜີຍຄວາມລັບຂອງຜູ້ດໍາເນີນວຽກງານເຕັກໂນໂລຊີລະດັບສູງ ໂດຍບໍ່ໄດ້ຮັບອະນຸຍາດ;

3. ກົດໜ່ວງ, ຖ່ວງດຶງ, ແກ່ຍາວເວລາໃນການພິຈາລະນາເອກະສານ ໂດຍບໍ່ຖືກຕ້ອງຕາມກົດໝາຍ;

4. ລາຍງານຂໍ້ມູນ ທີ່ບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

5. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 47 ຂໍ້ຫ້າມ ສໍາລັບຜູ້ດໍາເນີນວຽກງານເຕັກໂນໂລຊີລະດັບສູງ**

ຫ້າມ ຜູ້ດໍາເນີນວຽກງານເຕັກໂນໂລຊີລະດັບສູງ ມີພຶດຕິກໍາ ດັ່ງນີ້:

1. ດໍາເນີນວຽກງານເຕັກໂນໂລຊີລະດັບສູງ ໂດຍບໍ່ຖືກຕ້ອງຕາມການອະນຸຍາດ;

2. ໂຄສະນາ ເຜີຍແຜ່ ຫຼື ສະໜອງຂໍ້ມູນເກີນຄວາມເປັນຈິງ;

3. ນໍາເອົາໃບອະນຸຍາດຂອງຕົນ ໄປຄໍ້າປະກັນ ຫຼື ປະກອບເປັນຮຸ້ນ, ໃຫ້ຢືມ, ໃຫ້ເຊົ່າ, ໂອນ ຫຼື ຂາຍ ໃຫ້ຜູ້ອື່ນ;

4. ສວຍໃຊ້ການເຄື່ອນໄຫວວຽກງານເຕັກໂນໂລຊີລະດັບສູງ ໂດຍສ້າງຄວາມເສຍຫາຍໃຫ້ແກ່ຜູ້ອື່ນ ແລະ ສັງຄົມ;

5. ໃຫ້ສິນບົນ ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານເຕັກໂນໂລຊີລະດັບສູງ;

6. ໃຊ້ຄວາມຮຸນແຮງ ຫຼື ແອບອ້າງຊື່ຂອງຜູ້ອື່ນ ເພື່ອນາບຂູ່ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

7. ປອມແປງເອກະສານ, ນໍາໃຊ້ເອກະສານປອມ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

8. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VIII
# ການຄຸ້ມຄອງ ແລະ ກວດກາວຽກງານເຕັກໂນໂລຊີລະດັບສູງ

## ໝວດທີ 1
## ການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ

**ມາດຕາ 48 ອົງການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ**

ລັດຖະບານ ເປັນຜູ້ຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ຢ່າງລວມສູນ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນເຈົ້າການ ແລະ ຮັບຜິດຊອບໂດຍກົງ ໃນການປະສານສົມທົບກັບ ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ປະກອບດ້ວຍ:

1. ກະຊວງເຕັກໂນໂລຊີ ແລະ ການສື່ສານ;

2. ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ;

3. ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 49 ສິດ ແລະ ໜ້າທີ່ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ**

ໃນການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ກະຊວງເຕັກໂນໂລຊີ ແລະ ການສື່ສານ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ປັບປຸງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ ເປັນແຜນການ, ແຜນງານ ແລະ ໂຄງການລະອຽດ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

4. ຊີ້ນຳການປັບປຸງວຽກງານເຕັກໂນໂລຊີລະດັບສູງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ;

5. ພິຈາລະນາ ອອກ, ໂຈະ ຫຼື ຖອນໃບອະນຸຍາດ ການດຳເນີນວຽກງານເຕັກໂນໂລຊີລະດັບສູງ;

6. ຄົ້ນຄວ້າກ່ຽວກັບການສ້າງຕັ້ງເຂດເຕັກໂນໂລຊີລະດັບສູງ ເພື່ອສະເໜີລັດຖະບານພິຈາລະນາ;

7. ສ້າງ, ບຳລຸງ, ຍົກລະດັບ, ຄຸ້ມຄອງ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

8. ໂຈະ ຫຼື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ ຂັ້ນລຸ່ມຂອງຕົນທີ່ຂັດກັບກົດໝາຍ;

9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

10. ຊີ້ນຳ, ຕິດຕາມ, ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດ ເຂດເຕັກໂນໂລຊີລະດັບສູງ, ວຽກງານເຕັກໂນໂລຊີລະດັບສູງ ໃນຂອບເຂດທົ່ວປະເທດ;

11. ປະສານສົມທົບກັບກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານເຕັກໂນໂລຊີລະດັບສູງ;

12. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານເຕັກໂນໂລຊີລະດັບສູງ ໃຫ້ລັດຖະບານຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 50 ສິດ ແລະ ໜ້າທີ່ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

3. ຄຸ້ມຄອງ, ນຳໃຊ້, ສະເໜີສ້າງ, ຍົກລະດັບບຸກຄະລາກອນກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

4. ອອກ, ໂຈະ ຫຼື ຖອນໃບອະນຸຍາດດຳເນີນວຽກງານເຕັກໂນໂລຊີລະດັບສູງ;

5. ໂຈະ ຫຼື ຍົກເລີກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ຂອງຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ ທີ່ຂັດກັບກົດໝາຍ;

6. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

7. ຕິດຕາມ, ກວດກາ ແລະ ປະເມີນການຈັດຕັ້ງປະຕິບັດເຂດເຕັກໂນໂລຊີລະດັບສູງ, ວຽກງານເຕັກໂນໂລຊີລະດັບສູງ;

8. ປະສານສົມທົບກັບພະແນກ, ອົງການລັດທຽບເທົ່າພະແນກຂັ້ນແຂວງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານເຕັກໂນໂລຊີລະດັບສູງ;

9. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ ຕາມການມອບໝາຍ;

10. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານເຕັກໂນໂລຊີລະດັບສູງ ໃຫ້ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ອົງການປົກຄອງແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 51 ສິດ ແລະ ໜ້າທີ່ຂອງຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ**

ໃນການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

3. ຄົ້ນຄວ້າ ສະເໜີຕໍ່ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ເພື່ອພິຈາລະນາອອກ ຫຼື ຖອນໃບອະນຸຍາດ, ຢັ້ງຢືນ ແລະ ຮັບຮອງການດຳເນີນວຽກງານເຕັກໂນໂລຊີລະດັບສູງ;

4. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

5. ເກັບກຳ ແລະ ບັນທຶກຂໍ້ມູນ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

6. ຮັບພິຈາລະນາ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

7. ປະສານສົມທົບກັບຫ້ອງການ, ອົງການລັດທຽບເທົ່າຫ້ອງການຂັ້ນເມືອງ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານເຕັກໂນໂລຊີລະດັບສູງ;

8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານເຕັກໂນໂລຊີລະດັບສູງ ໃຫ້ພະແນກເຕັກໂນໂລຊີ ແລະ ການສື່ສານ ແຂວງ, ນະຄອນຫຼວງ ແລະ ອົງການປົກຄອງ ເມືອງ, ເທດສະບານ, ນະຄອນ ຢ່າງເປັນປົກກະຕິ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 52 ສິດ ແລະ ໜ້າທີ່ຂອງຂະແໜງການ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ**

ໃນການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ຂະແໜງການ, ພາກສ່ວນອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ປະຕິບັດວຽກງານ ເຕັກໂນໂລຊີລະດັບສູງ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍປະສານສົມທົບກັບຂະແໜງການເຕັກໂນໂລຊີ ແລະ ການສື່ສານ.

## ໝວດທີ 2
## ການກວດກາວຽກງານເຕັກໂນໂລຊີລະດັບສູງ

**ມາດຕາ 53 ອົງການກວດກາ ວຽກງານເຕັກໂນໂລຊີລະດັບສູງ**

ອົງການກວດກາວຽກງານເຕັກໂນໂລຊີລະດັບສູງ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນ ອົງການດຽວກັນກັບອົງການຄຸ້ມຄອງວຽກງານເຕັກໂນໂລຊີລະດັບສູງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 48 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນ ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສື່ມວນຊົນ ແລະ ປະຊາຊົນ.

**ມາດຕາ 54 ເນື້ອໃນການກວດກາ**

ການກວດກາ ວຽກງານເຕັກໂນໂລຊີລະດັບສູງ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍວ່າດ້ວຍເຕັກໂນໂລຊີລະດັບສູງ;

2. ແຜນການ, ແຜນງານ ແລະ ໂຄງການກ່ຽວກັບວຽກງານເຕັກໂນໂລຊີລະດັບສູງ;

3. ການເຄື່ອນໄຫວວຽກງານຂອງ ອົງການຄຸ້ມຄອງວຽກງານ ເຕັກໂນໂລຊີລະດັບສູງ ແລະ ພະນັກງານ-ລັດຖະກອນ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

4. ການດຳເນີນວຽກງານເຕັກໂນໂລຊີລະດັບສູງ.

**ມາດຕາ 55 ຮູບການການກວດກາ**

ການກວດກາ ວຽກງານເຕັກໂນໂລຊີລະດັບສູງ ມີຮູບການ ດັ່ງນີ້:

1. ການກວດກາຢ່າງເປັນປົກກະຕິ ຊຶ່ງແມ່ນ ການກວດກາ ທີ່ດຳເນີນຕາມແຜນການຢ່າງ ເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າ ມີຄວາມຈຳເປັນ ຊຶ່ງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາແບບຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານເຕັກໂນໂລຊີລະດັບສູງ ໃຫ້ປະຕິບັດຖືກຕ້ອງ ຕາມກົດໝາຍຢ່າງເຂັ້ມງວດ.

# ພາກທີ IX
# ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 56 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ເຂົ້າໃນການຈັດຕັ້ງປະຕິບັດວຽກງານເຕັກໂນໂລຊີລະດັບສູງ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 57 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

# ພາກທີ X
# ບົດບັນຍັດສຸດທ້າຍ

**ມາດຕາ 58 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 59 ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

**ປອ ໄຊສົມພອນ ພົມວິຫານ**